*Souphanouvong University Journal of Multidisciplinary Research and Development*
*2025, Vol. 11, No. 01, 205-210*
*https://doi.org/10.69692/SUJMRD1101205*

# Language Used in the Royal Teachings of King Fangum

**Khonesawan YANG**

*Lao Language and Culture Department, Faculty of Letters, National University of Laos, Lao PDR*

***Correspondence:** Khonesawan YANG, *Lao Language and Culture Department, Faculty of Letters, National University of Laos,* Tel: 020 29969956; E-mail: k.yang@nuol.edu.la

***Article Info:***
***Submitted: February 28, 2025***
***Revised: March 10, 2025***
***Accepted: March 21, 2025***

**Abstract**

This article aims to analyze Language used in the royal teachings of King Fa Ngum using Critical Discourse Analysis theory. The research findings reveal seven linguistic strategies employed: 1) the use of terminology that establishes power relationships, 2) grammatical sentence structures, 3) rhetorical methods and linguistic strategies, 4) descriptions of rituals to establish sacredness, 5) the use of compound words and word pairs, 6) legitimization strategies, and 7) references to social and economic strategies. The language in these royal proclamations functions to establish governing authority, define social regulations, and construct legitimacy through connections with beliefs and historical precedents.

**Keywords:** Analyze the textual, Critical Discourse Analysis, the royal teachings of King Fa Ngum

## 1. ພາກສະເໜີ

ພະຍາຟ້າງຸ່ມເຊື້ອກະສັດເມືອງຊວາ (ຫຼວງພະບາງ) ຕະກຸນຂຸນລໍແຫ່ງເມືອງແຖນ (ດຽນບຽນຟູ) ສາມາດເຕົ້າໂຮມລັດຕ່າງໆ ຢູ່ສອງຝັ່ງໂຫຼ້ງແມ່ນໍ້າຂອງເຂົ້າເປັນອານາຈັກ ຊື່ວ່າ: ລ້ານຊ້າງ ຕໍ່ມາເອີ້ນວ່າ ລາວລ້ານຊ້າງ ເຊິ່ງມີເອກະລາດ, ເອກະພາບ ແລະ ເຂັ້ມແຂງຮອບດ້ານ. ນີ້ຖືວ່າເປັນເຫດການໃຫຍ່ມີຄວາມໝາຍສຳຄັນທີ່ສຸດໃນປະຫວັດສາດລາວ ຍ້ອນວ່າເປັນເວລາຫຼາຍສະຕະວັດຜ່ານມາແລ້ວ ທີ່ຄົນລາວປະກອບດ້ວຍເຜົ່າຕ່າງໆ ໄດ້ຕັ້ງຫຼັກແຫຼ່ງຢ່າງໝັ້ນຄົງຢູ່ໃນດິນແດນຕອນນີ້ ແລະ ສາມາດກໍ່ສ້າງອານາຈັກນ້ອຍໃຫຍ່ແບບພໍໃຜພໍລາວ. ການທ້ອນໂຮມລາວ ຫຼື ການສ້າງຕັ້ງອານາຈັກລາວລ້ານຊ້າງໃນສະໄໝພະຍາຟ້າງຸ່ມນັ້ນຖືວ່າເປັນເຫດການປະຫວັດສາດທີ່ສຳຄັນທີ່ສຸດເຫດການໜຶ່ງໃນປະຫວັດສາດລາວ ເປັນບາດລ້ຽວໃຫຍ່ຂອງຊາດ, ມີການລວມຕົວກັນຈາກນະຄອນລັດ ແລະ ອານາຈັກເອກະເທດກະແຈກກະຈາຍ ເຂົ້າເປັນອານາຈັກລ້ານຊ້າງເອກະພາບກວ້າງໃຫຍ່ໄພສານ ເຮັດໃຫ້ຊາດລາວໄດ້ກາຍເປັນລັດຊາດນັບແຕ່ນັ້ນມາ. ຖ້າຫາກການລວມຕົວເຮັດບໍ່ສຳເລັດຕາມເປົ້າໝາຍ ເຮົາອາດບໍ່ສາມາດເດົາຊາຕາກຳຂອງຊາດບ້ານເມືອງລາວໄດ້. ການເຕົ້າໂຮມລາວຢ່າງສຳເລັດຜົນ ແມ່ນໃນສະໄໝພະຍາຟ້າງຸ່ມ. ດັ່ງນັ້ນ, ພະຍາຟ້າງຸ່ມ ຈຶ່ງມີຄວາມສຳຄັນ ແລະ ມີຄວາມໝາຍຕໍ່ປະຫວັດສາດຊາດລາວ (Ministry of Information-Culture, 2002).

ພາຍຫຼັງທີ່ພະຍາຟ້າງຸ່ມໄດ້ນຳກອງທັບລົງໄປເຕົ້າໂຮມເອົາບັນດາເມືອງຢູ່ທາງທິດຕາເວັນຕົກເຂດຊາຍແດນກຸງສີອະຍຸດທະຍາເຂົ້າໃນອານາຈັກລາວລ້ານຊ້າງໝົດແລ້ວມາພັກເຊົາ ແລະ ເຕົ້າໂຮມກັນຢູ່ວຽງຈັນ ເພື່ອກຽມສະຫຼອງໄຊໃຫຍ່ ແລະ ຈັດແຈງລະບຽບການປົກຄອງ. ເມື່ອໄດ້ລຶກງາມຍາມດີແລ້ວ ເຈົ້າພະຍາເສນາອາມາດທັງຫຼາຍ ແລະ ເຖົ້າແກ່ປະຊາຊົນທັງມວນກໍເຊີນພະຍາຟ້າງຸ່ມເຂົ້າພິທີຫົດສົງອວຍໄຊໃຫ້ພອນແກ່ພະຍາຟ້າງຸ່ມຕາມຮີດຄອງປະເພນີທີ່ມີມາແຕ່ບູຮານ ເມື່ອສິ້ນພິທີຫົດສົງແລ້ວພະຍາຟ້າງຸ່ມໄດ້ກ່າວໂອວາດຕັກເຕືອນສັ່ງສອນຕໍ່ເຈົ້າພະຍາເສນາອາມາດຕະຫຼອດຮອດພໍ່ແມ່ເຖົ້າແກ່ປະຊາຊົນທັງມວນ (Phothisane, 2000). ເນື້ອໃນບົດພະລາຊະໂອວາດພະຍາຟ້າງຸ່ມ ມີເນື້ອໃນຄຳສັ່ງ, ຄຳຕັກເຕືອນສັ່ງສອນ ແກ່ໄພ່ຟ້າບໍລິວານ ເຫຼົ່າທະຫານ ແລະ ປະຊາຊົນຂອງພະອົງຢູ່ໃນຄວາມສະຫງົບ, ມີແບບແຜນການດຳລົງຊີວິດ, ຮູ້ຈັກອະໄພໂທດໃຫ້ແກ່ກັນ ໃຫ້ມີຄວາມຍຸຕິທຳ ແລະ ພ້ອມພາກັນປະຕິບັດກົດໝາຍບ້ານເມືອງ (Luangphasy, 2012).

ພະລາຊະໂອວາດຂອງພະຍາຟ້າງຸ່ມມະຫາລາດມີຄວາມສຳຄັນ ແລະ ຈາກການສຶກສາເອກະສານການຄົ້ນຄວ້າທີ່ກ່ຽວຂ້ອງຜ່ານມາພົບວ່າ ຜົນງານຄົ້ນຄວ້າທີ່ຜ່ານມາໄດ້ມີແຕ່ການສຶກສາລົງເລິກວິເຄາະດ້ານເນື້ອໃນ ເຊັ່ນ: ພະລາຊະໂອວາດຂອງພະຍາຟ້າງຸ່ມຕາມສຳນວນເດີມມີ 7 ປະເດັນ ແລະ ສະຫຼຸບໄດ້ 3 ຄວາມໝາຍຄື ດ້ານເສດຖະກິດ-ສັງຄົມ ໂດຍສະເພາະໄດ້ເນັ້ນເຖິງລະບຽບວິໄນ ຄືການປ້ອງກັນຄວາມສະຫງົບສຸກ, ຈຸດຕໍ່ມາແມ່ນເວົ້າເຖິງກົດໝາຍການຕັດສິນຄະດີ, ຈຸດທີສາມເນັ້ນເຖິງເສດຖະກິດ ໂດຍເນັ້ນວ່າຄົນແມ່ນພາກສ່ວນທີ່ສຳຄັນ ຕ້ອງຮັກສາຊີວິດມະນຸດ ໄວ້ບໍ່ໃຫ້ຂ້າເດັດຂາດ. ໃນດ້ານວຽກງານປ້ອງກັນຊາດ ພະອົງໄດ້ຮຽກຮ້ອງໃຫ້ແມ່ທັບນາຍກອງ ເຈົ້າບ້ານຜ່ານເມືອງເອົາໃຈໃສ່ຮັກຊາດ ນີ້ແມ່ນໜ້າທີ່ຂອງທຸກຄົນໃນຊາດທີ່ຕ້ອງຮ່ວມແຮງກັນ ເພາະການທ້ອນໂຮມຊາດແມ່ນໄດ້ມາດ້ວຍເລືອດເນື້ອ ແລະ ຊີວິດ ທຸກຄົນຕ້ອງຊ່ວຍກັນຮັກສາບໍ່ໃຫ້ຕ່າງຊາດມາບຽດບຽນ ((Ministry of Information-Culture, 2002). ພະລາຊະໂອວາດຂອງພະຍາຟ້າງຸ່ມໃນຖານະກົດໝາຍເປັນ 5 ມາດຕາ ໂດຍຖືວ່າເປັນຂະໜົບທຳນຽມ ຫຼືເປັນກົດໝາຍເພື່ອປະຕິບັດພົວພັນລະຫວ່າງຊົນຊັ້ນຄົນໃນສັງຄົມມາ

ຫຼາຍຊົ່ວເຈົ້າແຜ່ນດິນ ເຫັນໄດ້ວ່າເປັນການຄຸ້ມຄອງໄພ່ຟ້າປະຊາຊົນເປັນຢ່າງດີ ບໍ່ໃຫ້ຜູ້ມີອຳນາດບາດໃຫຍ່ກົດຂີ່ຂົ່ມເຫັງຄົນທຳມະດາ ຖືວ່າເປັນກົດໝາຍສັກດິນາ ຫຼືວ່າກົດໝາຍບູຮານລາວດັ້ງເດີມທີ່ມີສົມມຸດຖານຈາກຮີດຄອງປະເພນີ ຄຳພີມານູສາດ ແລະ ສິນທຳຂອງພະພຸດທະສາສະໜາມາປະຍຸກໃຊ້ໃນການປົກຄອງບ້ານເມືອງເປັນທີ່ໄດ້ຜົນມາແລ້ວ (Bouasisavath, 1997).

ນອກຈາກນີ້, (Vongdala, 1992) ໄດ້ຈັດພະລາຊະໂອວາດຂອງພະຍາຟ້າງຸ່ມເປັນວັນນະກຳຂຽນສະບັບທຳອິດຂອງອານາຈັກລ້ານຊ້າງ ໃນປະເພດວັນນະຄະດີປະຫວັດສາດທີ່ມີເນື້ອໃນສ່ອງສອງປະຫວັດສາດ, ເປັນຄວາມຈິງທີ່ເກີດຂຶ້ນໃນປະຫວັດສາດລາວ ສັນນິຖານວ່າ ພະຍາຟ້າງຸ່ມເປັນຜູ້ແຕ່ງຂຶ້ນ ແລະ ດ້ານເນື້ອໃນໄດ້ຢັ້ງຢືນຄຸນຄ່າບົດບາດຂອງຄົນຜູ້ອອກແຮງງານຜະລິດຜົນ, ທັງເປັນພື້ນຖານໃຫ້ແກ່ການປົກຄອງ, ການກຳນົດວິທີປັບປຸງອຳນາດໃຫ້ເອກະພາບແຕ່ສູນກາງຮອດທ້ອງຖິ່ນ ໂດຍຍຶດຖືຄວາມເຊື່ອເລື່ອງແຖນ; ພະລາຊະໂອວາດຂອງພະຍາຟ້າງຸ່ມ ສະແດງໃຫ້ເຫັນຢ່າງທະນົງໃຈຕໍ່ຄວາມເປັນເອກະພາບຂອງລັດລາວ ໄດ້ດຳເນີນການປົກຄອງໂດຍຖືເອົາຄຸນຄ່າ ແລະ ບົດບາດຂອງຄົນຜູ້ອອກແຮງງານເປັນພື້ນຖານ, ໜ້າທີ່ປົກປັກຮັກສາປະເທດ ແລະ ປັບປຸງອຳນາດການປົກຄອງເປັນໜ້າທີ່ຂອງທຸກຄົນ ແລະ ມີມະນຸດສະທຳຢ່າງໜ້າສັນລະເສີນ. (Thongmexay, 2016) ກໍໄດ້ຈັດພະລາຊະໂອວາດຂອງພະຍາຟ້າງຸ່ມເປັນ ປະເພດວັນນະຄະດີປະຫວັດສາດທີ່ສຳຄັນ ແລະ ມີຄຸນຄ່າຂອງຊາດລາວ, ພະຍາຟ້າງຸ່ມໄດ້ແຕ່ງ ແລະ ປະທານໂອວາດໃຫ້ແກ່ເສນາອາມາດທັງຫຼາຍຫຼັງຈາກສະຫຼອງໄຊ ເນື້ອໃນຕົ້ນຕໍຂອງໂອວາດໄດ້ ຢືນຢັນຄຸນຄ່າ ແລະ ບົດບາດຂອງຄົນ, ມີຄົນຈຶ່ງມີທຸກຢ່າງແນວຄິດດັ່ງກ່າວເປັນແນວຄິດໃໝ່ທີ່ກ້າວໜ້າເປັນແນວຄິດມະນຸດສະທຳ, ໃນບົດໂອວາດໄດ້ຕັກເຕືອນເສນາອາມາດທັງຫຼາຍໃຫ້ຮັກແພງກັນຮັກປ່າວໄພ່ລາສະດອນ, ບໍ່ໃຫ້ຂ້າໃຫ້ຕີກັນ, ທັງປົກປັກຮັກສາບ້ານເມືອງບໍ່ໃຫ້ສັດຕູພາຍນອກບຽດບຽນ. ອີກດ້ານໜຶ່ງກໍຕ້ອງເອົາໃຈໃສ່ໃນການປະຕິບັດຮີດບ້ານຄອງເມືອງອີກດ້ວຍ. (Sibounheuang, 2012) ໃນການຂະຫຍາຍຕົວດ້ານວັນນະຄະດີລາວ ພາກສ່ວນວັນນະຄະດີລ້ານຊ້າງ ກໍກ່າວເຖິງບົດພະລາຊາໂອວາດຂອງພະຍາຟ້າງຸ່ມໄດ້ຖືກນັກຄົ້ນຄວ້າຖືເປັນວັນນະຄະດີຂຽນສະບັບທຳອິດ.

ສຳລັບການສຶກສາດ້ານການນຳໃຊ້ພາສາໃນບົດພະລາຊະໂອວາດແມ່ນຍັງບໍ່ທັນມີການຄົ້ນຄວ້າສະເພາະ. ດັ່ງນັ້ນ, ຜູ້ສຶກສາຈຶ່ງມີຄວາມສົນໃຈ ໃນການນຳເອົາແນວຄິດການວິເຄາະຂໍ້ຄວາມ ເພື່ອມາວິເຄາະດ້ານພາສາໃນບົດພະລາຊະໂອວາດ ການວິເຄາະພາສາ ສົນໃຈສຶກສາໜ່ວຍພາສາໃນລະດັບທີ່ສູງກວ່າປະໂຫຍກໃນຫຼາຍແງ່ມຸມ ໃນນັ້ນມີການວິເຄາະວິທີທາງພາສາໃນບົດ (Angkhaphanichkit, 2019) ເຊັ່ນ: ວິທີທາງສັບ, ວິທີການຂະຫຍາຍຄວາມ, ວິທີການວາທະໄນຍະສາດ ແລະ ວາທະກຳ ແລະ ວິທີການທາງວາທະສິນ. ຍັງມີ (Gadavanij, 2022) ແລະ (Partridge, 2006) ກໍໄດ້ສະເໜີແນວທາງຂອງການວິເຄາະພາສາທີ່ໃຊ້ໃນການສື່ສານແຕ່ລະຂັ້ນຕອນ ແລະ ອົງປະກອບທີ່ສຳຄັນຂອງການຈັດການຂໍ້ຄວາມທີ່ໃຊ້ໃນການສື່ສານແມ່ນການ ສ້າງຂໍ້ຄວາມໃຫ້ສື່ສາລະຕໍ່ເນື່ອງກັນໄປຢ່າງມີລະບົບ ໂດຍການນຳສ່ວນຂອງຖ້ອຍຄຳ ຫຼືສ່ວນຂອງຂໍ້ຄວາມ (part) ທີ່ມີໂຄງສ້າງຂອງຂໍ້ຄວາມ (Information Structure) ໃຫ້ມີການຮຽບຮຽງຕໍ່ເນື່ອງກັນໄປເປັນເລື່ອງລາວ (Sequences). ບົດຄວາມຂອງ Khanthavongxay & Paphaphanh (2024) ໄດ້ວິເຄາະໜ່ວຍຜູກຄວາມຕາມປະເພດຄວາມໝາຍ ແລະ ໜ້າທີ່ຂອງບົດສື່ຄວາມໃນພາສາລາວ ໃນຊຸດ "ຈາກໄປແລ້ວສິບປີເຫຼັ້ມ 3 " ຂອງອຸທິນ ບຸນຍາວົງ ພົບວ່າ ພົບໜ່ວຍຜູກຄວາມມີ 2 ໜ້າທີ່ ຄື ໜ້າທີ່ຜູກຄວາມຈຸລະພາກໃນໜ້າທີ່ນີ້ປາກົດ 8 ປະເພດໜ່ວຍຄວາມໝາຍໄດ້ແກ່ ໜ່ວຍຜູກສະແດງຄວາມຂັດແຍ້ງ, ສະແດງເຫດຜົນ, ສະແດງການຂະຫຍາຍຄວາມ, ສະແດງເງື່ອນໄຂ, ສະແດງທາງເລືອກ, ສະແດງເວລາ, ສະແດງຕົວຢ່າງ, ແລະ ໜ່ວຍສະແດງການສະຫຼຸບຄວາມ; ສ່ວນໜ້າທີ່ຜູກຄວາມມະຫາພາກໃນໜ້າທີ່ນີ້ປາກົດ 5 ປະເພດໜ່ວຍຄວາມໝາຍ ຄື ໜ່ວຍຜູກສະແດງຄວາມຂັດແຍ້ງ, ສະແດງເຫດຜົນ, ສະແດງການສະຫຼຸບຄວາມ, ສະແດງການຮຽງລຳດັບ ແລະ ສະແດງການຂະຫຍາຍຄວາມ.

ການສຶກສາພະລາຊະໂອວາດພະຍາຟ້າງຸ່ມໃນການສະຖາປະນາອານາຈັກລ້ານຊ້າງເອກະພາບໃນຄັ້ງນີ້ ຈຸດປະສົງແມ່ນວິເຄາະການໃຊ້ພາສາໃນບົດພະລາຊະໂອວາດ ທີ່ຖືວ່າເປັນເຄື່ອງມືສື່ສານສຳຄັນ ໃນການສື່ສານຈາກພະລາຊະໂອວາດຈາກພະຍາຟ້າງຸ່ມແກ່ໄພ່ຟ້າລາສະດອນ ເພື່ອປະກອບສ້າງຄວາມໝາຍ ແລະ ສະແດງໃຫ້ເຫັນວິທີການໃຊ້ພາສາຂອງພະຍາຟ້າງຸ່ມເພື່ອການສະຖາປະນາອຳນາດ, ກຳນົດກົດລະບຽບທາງສັງຄົມ, ແລະສ້າງຄວາມຊອບທຳໃນອານາຈັກ.

## 2. ອຸປະກອນ ແລະ ວິທີການ

2.1 ວິທີການຄົ້ນຄວ້າ

ການສຶກສາຄັ້ງນີ້ ແມ່ນການສຶກສາຈາກເອກະສານ (Document Research) ໂດຍມີວິທີການຄື:

1) ຮວບຮວມເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ.

2) ທົບທວນແນວຄິດທິດສະດີການວິເຄາະວິພາກບົດຂອງນໍແມນ ແຟຄລັບ (Fairclough, 1992) ແລະ ການວິເຄາະພາສາຂອງ (Angkhaphanichkit, 2019)

3) ຄັດເລືອກເອົາບົດພະລາຊະໂອວາດຂອງພະຍາຟ້າງຸ່ມ ໃນປື້ມຕຳນານຂຸນບູລົມລາຊາທິລາດ (ພົງສາວະດານເມືອງລ້ານຊ້າງ) ຮົມໂຮມໂດຍ ສີລາ ວິລະວົງ ແລະ ນວນ ອຸເທນສັກດາ (Vilavong & Outhensakda, 1994).

4) ວິເຄາະຕາມຈຸດປະສົງ ແລະ ຂອບເຂດແນວຄິດ

5) ນຳສະເໜີຜົນການຄົ້ນຄວ້າແບບພັນລະນາວິເຄາະ (Descriptive Analysis) ໂດຍການອະທິບາຍ, ຍົກຕົວຢ່າງ, ສະຫຼຸບ ແລະ ອະພິປາຍຜົນ.

2.2 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນແມ່ນ ຈະນຳເອົາບົດພະລາຊະໂອວາດທີ່ພະຍາຟ້າງຸ່ມກ່າວໃນມື້ສະຫຼອງໄຊທີ່ວຽງຈັນ ມາວິເຄາະຕາມແນວຄິດທິດສະດີ ເພື່ອຈະພົບວິທີການໃຊ້ພາສາ ແລ້ວນຳສະເໜີເປັນແຕ່ລະຂໍ້ ຄື: 1) ການໃຊ້ຄຳສັບທີ່ສະແດງຄວາມສຳພັນທາງອຳນາດ, 2) ໂຄງສ້າງຂອງປະໂຫຍກທາງໄວຍາກອນ, 3) ວິທີທາງວາທະກຳ ແລະ ກົນລະຍຸດທາງພາສາ, 4) ການພັນລະນາພິທີກຳເພື່ອສ້າງຄວາມສັກສິດ, 5) ການໃຊ້ຄຳຊ້ອນ ແລະ ຄຳຄູ່, 6) ກົນລະຍຸດການສ້າງຄວາມຊອບທຳ ແລະ 7) ການອ້າງອີງຍຸດທະສາດທາງສັງຄົມ ແລະ ເສດຖະກິດ.

## 3. ຜົນໄດ້ຮັບ

ການວິເຄາະການນຳໃຊ້ພາສາໃນພະລາຊະໂອງການພະຍາຟ້າງຸ່ມມະຫາລາດໃນການສະຖາປະນາອານາຈັກລ້ານຊ້າງເອກະພາບພົບວ່າ ມີວິທີການໃຊ້ພາສາດັ່ງນີ້:

3.1 ການໃຊ້ຄຳສັບທີ່ສະແດງຄວາມສຳພັນທາງອຳນາດ

ຄຳສັບທີ່ສະແດງຄວາມສຳພັນທາງອຳນາດທີ່ພົບມີ 2 ກໍລະນີ ຄື: ການໃຊ້ສັບພະນາມ ແລະ ການໃຊ້ຄຳສັບທີ່ກ່ຽວຂ້ອງກັບຊົນຊັ້ນທາງສັງຄົມ ດັ່ງນີ້:

1) ການໃຊ້ສັບພະນາມ

ການໃຊ້ສັບພະນາມທີ່ພົບມີ 2 ກໍລະນີ ຄື: ສັບພະນາມບຸລຸດທີໜຶ່ງ ແລະ ສັບພະນາມບຸລຸດທີສອງຈຳນວນຫຼາຍດັ່ງນີ້:

- "ເຮົາ"

ພະຍາຟ້າງຸ່ມໃຊ້ "ເຮົາ" ເປັນສັບພະນາມບຸລຸດທີໜຶ່ງ ເຊິ່ງເປັນຄຳສັບສະເພາະກະສັດ ຫຼື ລາຊາສັບ.

ຄຳນີ້ສະແດງເຖິງອຳນາດສູງສຸດໃນຖານະພະຍາຟ້າງຸ່ມຜູ້ປົກຄອງ ແລະ ມັນໄດ້ສ້າງໄລຍະຫ່າງລະຫວ່າງພະອົງ ແລະ ຜູ້ຟັງກໍຄືເສນາອາມາດ ແລະ ໄພ່ຟ້າລາສະດອນ.

ຕົວຢ່າງ: "ເຮົາວ່າບໍ່ຊື່ຕໍ່ເຮົາແລ", "ເຫດເຮົາບໍ່ໃຫ້ຂ້າຄົນເພື່ອດັ່ງນີ້ແລ"

- "ເຈົ້າທັງຫຼາຍ"

ການເອີ້ນຜູ້ຮັບສານວ່າ "ເຈົ້າທັງຫຼາຍ" ເປັນການໃຊ້ສັບພະນາມບຸລຸດທີສອງຈຳນວນຫຼາຍ. ພະຍາຟ້າງຸ່ມໃຊ້ແທນຜູ້ຟັງທີ່ເປັນຂຸນນາງ ຫຼື ຜູ້ປົກຄອງທ້ອງຖິ່ນ, ບໍ່ແມ່ນປະຊາຊົນທົ່ວໄປ.

ຕົວຢ່າງ: "ເຈົ້າທັງຫຼາຍໃຫ້ຮັກສາບ້ານເມືອງ",

"ເຈົ້າທັງຫຼາຍຢ່າໄດ້ເອົາໄພ່ເປັນຂ້ອຍ"

ຈາກຕົວຢ່າງ ຈະເຫັນວ່າ ການໃຊ້ສັບພະນາມນີ້ ເປັນສ້າງການຮັບຮູ້ສະຖານະຜູ້ຟັງຈຳນວນໜຶ່ງທີ່ສູງກວ່າປະຊາຊົນທົ່ວໄປ ແຕ່ຍັງກໍຍັງຕ່ຳກວ່າພະຍາຟ້າງຸ່ມ.

2) ການໃຊ້ສັບທີ່ກ່ຽວຂ້ອງກັບຊົນຊັ້ນທາງສັງຄົມ

ການໃຊ້ສັບທີ່ກ່ຽວຂ້ອງກັບຊົນຊັ້ນທາງສັງຄົມພົບມີ 2 ກໍລະນີ ຄື: ຄຳທີ່ອ້າງເຖິງປະຊາຊົນ ແລະ ຄຳທີ່ອ້າງເຖິງຜູ້ປົກຄອງ ດັ່ງນີ້:

- "ໄພ່","ຂ້ອຍ"

ການໃຊ້ຄຳເຫຼົ່ານີ້ ແມ່ນເປັນການອ້າງເຖິງປະຊາຊົນສະທ້ອນເຖິງລະບົບລຳດັບຊັ້ນທາງສັງຄົມ. ໄພ່ ໝາຍເຖິງປະຊາຊົນທົ່ວໄປ, ຂ້ອຍ ໝາຍເຖິງຜູ້ຮັບໃຊ້ ເຊິ່ງເປັນຊົນຊັ້ນຕ່ຳສຸດໃນສັງຄົມເວລານັ້ນ.

ຕົວຢ່າງ: "ເຈົ້າທັງຫຼາຍຢ່າໄດ້ເອົາໄພ່ເປັນຂ້ອຍ",

"ໄພ່ຜິດກັນເປັນອັນໜັກ"

- "ເສນາ"

ຄຳນີ້ບົ່ງບອກເຖິງຊົນຊັ້ນໃນລະບົບລາຊະສຳນັກ ຫຼື ເປັນຜູ້ບັນຊາການທາງການທະຫານ, ພົນລະເຮືອນ, ສະແດງວ່າສັງຄົມມີໂຄງສ້າງອຳນາດທີ່ເປັນລຳດັບຊັ້ນ.

ຕົວຢ່າງ: "ເມຍຕົນຜິດກໍດີ ເສນາ ແລະ ລູກນາຕົນຜິດກໍດີ"

3.2 ໂຄງສ້າງປະໂຫຍກທາງໄວຍາກອນ

ໃນບົດພະລາຊະໂອງການມີໂຄງສ້າງປະໂຫຍກທາງໄວຍາກອນ ຄື: ປະໂຫຍກບົງການ, ໂຄງສ້າງປະໂຫຍກບອກເຫດ-ຜົນ ແລະ ປະໂຫຍກບອກການຈັດຮຽງຕາມລຳດັບຄວາມສຳຄັນ.

1) ປະໂຫຍກບົງການ

ປະໂຫຍກບົງການທີ່ພົບມີ 2 ກໍລະນີ ຄື: ປະໂຫຍກຄຳສັ່ງ ແລະ ປະໂຫຍກການຫ້າມ ດັ່ງນີ້:

- ປະໂຫຍກຄຳສັ່ງ ທີ່ເລີ່ມຕົ້ນດ້ວຍຄຳວ່າ "ໃຫ້" ສ່ວນຫຼາຍເປັນຄຳສັ່ງໂດຍກົງ ເຊິ່ງມັນເປັນການສະແດງອຳນາດໃນການສັ່ງການຂອງພະຍາຟ້າງຸ່ມ.

ຕົວຢ່າງ: "ໃຫ້ຮັກສາບ້ານເມືອງ",

"ໃຫ້ຜູ້ອື່ນພິຈາລະນາດູກ່ອນ",

"ໃຫ້ໃສ່ຄອກຂັງໄວ້"

- ປະໂຫຍກການຫ້າມມີຄຳວ່າ "ຢ່າ" ເປັນການຫ້າມທີ່ຊັດເຈນໂດຍໄດ້ສະແດງເຖິງອຳນາດ ໃນການຈຳກັດພຶດຕິກຳຂອງຜູ້ອື່ນ.

ຕົວຢ່າງ: "ຢ່າໃຫ້ມີຂ້າລັກຄົນໂຈນ",

"ຢ່າໃຫ້ຂ້າຟັນກັນ",

"ຢ່າຫຼອນຟັນຂ້າເສຍ"

2) ໂຄງສ້າງປະໂຫຍກບອກເຫດ-ຜົນ

ໂຄງສ້າງປະໂຫຍກບອກເຫດ-ຜົນພົບວ່າມີ 2 ກໍລະນີ ຄື: ເພື່ອສະໜັບສະໜູນເຫດຜົນຂອງຄຳສັ່ງ ແລະ ອະທິບາຍເຫດຜົນຂອງຄຳສັ່ງດັ່ງນີ້:

- ໂຄງສ້າງປະໂຫຍກທີ່ມີຄຳວ່າ: "ຄັນ...ກໍ..." ເປັນໂຄງສ້າງປະໂຫຍກທີ່ສະແດງຄວາມສຳພັນເຫດ-ຜົນ ເພື່ອສະໜັບສະໜູນເຫດຜົນຂອງຄຳສັ່ງ.

ຕົວຢ່າງ: "ຄັນມີຄົນ ສົມບັດກໍຈຶ່ງມີ, ຄັນບໍ່ມີຄົນ ສົມບັດເຂົ້າຂອງກໍຫາບໍ່ໄດ້ແລ"

- ການອະທິບາຍເຫດຜົນຂອງຄຳສັ່ງ:

ຕົວຢ່າງ: "ເຫດເຮົາບໍ່ໃຫ້ຂ້າຄົນເພື່ອດັ່ງນີ້ແລ"

ນີ້ສະແດງວ່າຄຳສັ່ງບໍ່ໄດ້ເປັນພຽງການບັງຄັບ ແຕ່ມີເຫດຜົນສະໜັບສະໜູນ.

3) ການຈັດຮຽງຕາມລຳດັບຄວາມສຳຄັນ

- ໃນບົດພະລາຊະໂອງການພົບວ່າ ມີການໃຊ້ຄຳວ່າ: "ອັນໜຶ່ງ" ຖືວ່າເປັນວິທີການຈັດລະບຽບຄວາມຄິດ ແລະ ສັ່ງການຢ່າງເປັນລະບົບທັງແມ່ນການສະແດງການຄວບຄຸມ ແລະ ແຜນການອັນລະອຽດ.

ຕົວຢ່າງ: "ອັນໜຶ່ງ ເຈົ້າທັງຫຼາຍກໍຢ່າຜິດຢ່າຂ້ອງກັນ...",

"ອັນໜຶ່ງ ຕ່າງບ້ານຕ່າງເມືອງທັງມວນ..."

3.3. ວິທີທາງວາທະກຳ ແລະ ກົນລະຍຸດທາງພາສາ

ວິທີທາງວາທະກຳ ແລະ ກົນລະຍຸດທາງພາສາແມ່ນວິທີການສ້າງບົດພະລາຊະໂອງການເພື່ອສ້າງຄວາມຊອບທຳ ແລະ ສື່ອຳນາດຂອງພະຍາຟ້າງຸ່ມ ມີ 2 ກໍລະນີ ດັ່ງນີ້:

1) ການລະບຸບຸກຄົນທຸກລະດັບຊົນຊັ້ນເພື່ອສະແດງຄວາມເທົ່າທຽມຕໍ່ໜ້າກົດໝາຍ

- ການລະບຸບຸກຄົນຫຼາຍລະດັບຊົນຊັ້ນ:

ຕົວຢ່າງ: "ຂ້ອຍຕົນຜິດກໍດີ ເມຍຕົນຜິດກໍດີ ເສນາ ແລະ ລູກນາຕົນຜິດກໍດີ"

ສະແດງວ່າກົດລະບຽບທີ່ຈະນໍາໃຊ້ແມ່ນການນໍາໃຊ້ກັບທຸກຄົນໃນອານາຈັກ ລວມທັງຊົນຊັ້ນຜູ້ປົກຄອງ ຫຼື ຄົນໃກ້ຊິດກະສັດ. ນີ້ຖືວ່າເປັນເຕັກນິກທາງວາທະກໍາເພື່ອສ້າງຄວາມຊອບທໍາໃຫ້ລະບົບກົດໝາຍຂອງພະອົງໃນການປົກຄອງ.

2) ການໃຊ້ຮູບພາບພົດເພື່ອສື່ອໍານາດ

- ພາບພົດຂອງການລົງໂທດ:

ຕົວຢ່າງ: "ໃຫ້ໃສ່ຄອກຂັງໄວ້ ສົມໂທດແລ້ວໃຫ້ປ່ອຍເສຍ"

ຕົວຢ່າງນີ້ແມ່ນການສ້າງພາບພົດທີ່ຊັດເຈນຂອງອໍານາດໃນການລົງໂທດ ແລະ ປ່ອຍຄົນ.

- ພາບພົດຂອງຊີວິດທີ່ມີຄຸນຄ່າ:

ຕົວຢ່າງ: "ຫາວຽກຫາການ"

ຕົວຢ່າງນີ້ເປັນການໃຊ້ພາບພົດທີ່ສື່ເຖິງແນວຄິດທີ່ວ່າ ຊີວິດ ແລະ ແຮງງານຂອງປະຊາຊົນມີຄຸນຄ່າຕໍ່ອານາຈັກ.

3.4 ການພັນລະນາພິທີກໍາເພື່ອສ້າງຄວາມສັກສິດ

ການພັນລະນາພິທີກໍາເພື່ອສ້າງຄວາມສັກສິດພົບວ່າມີ 2 ກໍລະນີ ດັ່ງນີ້:

- ການລະບຸຊື່ຂອງແຖນ:

ຕົວຢ່າງ: "ແຖນຟ້າຄື່ນ ທັງແຖນກົມ ແຖນແຕ່ງ ແຖນຊົ່ງ ແຖນເຖົາ ທັງເຖົ້າເຍີ ເຖົ້າໄລ..."

ນີ້ແມ່ນການນໍາໃຊ້ການເນັ້ນຢໍ້າຄວາມຫຼາກຫຼາຍຂອງສິ່ງສັກສິດ ຂອງຄົນໃນອານາຈັກທີ່ເຊື່ອຖືແຖນ. ພະຍາຟ້າງຸ່ມໄດ້ລະບຸຊື່ຂອງແຖນ ເພື່ອສ້າງຄວາມໜັກແໜ້ນໃຫ້ກັບບົດພະລາຊະໂອວາດຜ່ານອໍານາດສັກສິດ ແລະ ຄວາມເຊື່ອ.

- ການລະບຸພື້ນທີ່ສັກສິດ:

ຕົວຢ່າງ: "ຊຽງດົງຊຽງທອງ", "ຜາຕັ່ງ", "ສົບອູ"

ເປັນການລະບຸພື້ນທີ່ສັກສິດຂອງອານາຈັກທີ່ຄົນເຄົາລົບບູຊາເຊິ່ງເປັນການເຊື່ອມໂຍງອໍານາດການປົກຄອງກັບພູມສາດອັນສັກສິດຂອງອານາຈັກ.

3.5 ການໃຊ້ຄໍາຊ້ອນ ແລະ ຄໍາຄູ່

ການໃຊ້ຄໍາຊ້ອນ ແລະ ຄໍາຄູ່ໃນບົດພະລາຊະໂອວາດພົບວ່າມີ 2 ກໍລະນີ ດັ່ງນີ້:

1) ຄໍາຊ້ອນທີ່ສ້າງຄວາມໜັກແໜ້ນ

ຕົວຢ່າງ: "ຂ້າລັກຄົນໂຈນ":

ການໃຊ້ຄໍາຊ້ອນນີ້ ເພື່ອລະບຸພຶດຕິກໍາທີ່ບໍ່ຕ້ອງການ ຢ່າງຊັດເຈນແລະ ຄົບຖ້ວນ.

ຕົວຢ່າງ: "ຂຶ້ນສູ່ບ້ານສູ່ເມືອງ",
"ຫາວຽກຫາການ"

ຄໍາຊ້ອນເຫຼົ່ານີ້ສ້າງຄວາມຄົບຖ້ວນ ແລະ ເນັ້ນໜັກຄວາມໝາຍ.

2) ການໃຊ້ຄໍາຄູ່ຂັດແຍ້ງເພື່ອສື່ເຫດຜົນ

ຕົວຢ່າງ: "ໂທດອັນໜັກ" ກັບ "ໂທດບໍ່ໜັກ"

ເປັນການໃຊ້ຄໍາຄູ່ທີ່ນໍາສະເໜີແນວຄິດທີ່ຂັດແຍ້ງກັນ ເພື່ອສ້າງຄວາມຊັດເຈນໃນລະບົບຄວາມຍຸຕິທໍາ.

3.6 ກົນລະຍຸດການສ້າງຄວາມຊອບທໍາ

ກົນລະຍຸດການສ້າງຄວາມຊອບທໍາພົບວ່າມີ 2 ກໍລະນີ ຄື:

1) ການອ້າງອີງປະເພນີ ແລະ ບັນພະບຸລຸດ

ຕົວຢ່າງ: "ປູ່ເຈົ້າຟ້າຫຼວງໂງ່ມສັ່ງໄວ້ສືບໆມາດັ່ງນີ້ແລ"

ກົນລະຍຸດນີ້ ເປັນການເຊື່ອມໂຍງຄໍາສັ່ງປັດຈຸບັນກັບປະເພນີ ແລະ ບັນພະບຸລຸດ ຖືວ່າພະຍາຟ້າງຸ່ມໄດ້ສ້າງຄວາມຊອບທໍາໂດຍອ້າງອີງອໍານາດຈາກອະດີດຜ່ານມາ.

2) ການອ້າງອີງພິທີກໍາ

ຕົວຢ່າງ: "ເຮົາຈັກໄດ້ບູຊາແຖນຟ້າຄື່ນ":

ການອ້າງອີງພິທີກໍາການບູຊາທີ່ສະແດງຄວາມສໍາພັນລະຫວ່າງອໍານາດການປົກຄອງ ແລະ ອໍານາດເໜືອທໍາມະຊາດ.

ຕົວຢ່າງ: "ຄວາຍ 36 ຕົວ"**:

ການລະບຸຈໍານວນຄວາຍບູຊາທີ່ແນ່ນອນເພີ່ມຄວາມໜ້າເຊື່ອຖື ແລະ ຂະໜາດຂອງພິທີກໍາ.

3.7 ການອ້າງອີງຍຸດທະສາດທາງສັງຄົມ ແລະ ເສດຖະກິດ

ການອ້າງອີງຍຸດທະສາດທາງສັງຄົມ ແລະ ເສດຖະກິດພົບວ່າມີ 2 ກໍລະນີ ຄື:

1) ການເນັ້ນຄຸນຄ່າຂອງປະຊາກອນຕໍ່ເສດຖະກິດ

ຕົວຢ່າງ: "ສົມບັດອັນຈັກເກີດມີມາໃນແຜ່ນດິນນີ້ ຄັນມີຄົນ ສົມບັດກໍຈຶ່ງມີ"

ຕົວຢ່າງນີ້ ສະແດງເຖິງແນວຄິດຂອງພະຍາຟ້າງຸ່ມທີ່ຖືວ່າປະຊາກອນເປັນແຫຼ່ງຊັບພະຍາກອນທີ່ມີຄ່າສໍາລັບຄວາມຮັ່ງມີຂອງອານາຈັກ.

2) ການກໍານົດມູນຄ່າຂອງຊີວິດ ແລະ ຄວາມຜິດ

ຕົວຢ່າງ: "ມີຊູ້ສູ່ເມຍທ່ານ ໃຫ້ໃໝເອົາແຕ່ຫ້າບາດ"

ຕົວຢ່າງນີ້ເປັນການກໍານົດຄ່າປັບໃໝສໍາລັບຄວາມຜິດຢ່າງຊັດເຈນ ມັນສະທ້ອນໄດ້ເຫັນເຖິງຄວາມພະຍາຍາມໃນການສ້າງລະບົບກົດໝາຍທີ່ເປັນມາດຕະຖານ.

ຕົວຢ່າງ: "ໄປເສິກຢ່າເອົາຄ່າຫົວໄພ່ ແຕ່ບາດໜຶ່ງເຖິງສອງບາດ ກໍເທົ່າເຖິງຮ້ອຍ":

ຕົວຢ່າງນີ້ກໍເປັນການກໍານົດຂອບເຂດສູງສຸດຂອງການເກັບຄ່າຕອບແທນຈາກປະຊາຊົນ, ສະແດງເຖິງຄວາມພະຍາຍາມຄວບຄຸມການຂູດຮີດອີກດ້ວຍ.

**4. ວິພາກຜົນ**

ການວິເຄາະສະແດງໃຫ້ເຫັນຢ່າງຊັດເຈນວ່າພາສາບໍ່ພຽງແຕ່ເປັນເຄື່ອງມືໃນການສື່ສານ ແຕ່ຍັງເປັນກົນໄກໃນການສະຖາປະນາອໍານາດ, ກໍານົດກົດລະບຽບທາງສັງຄົມ, ແລະ ສ້າງຄວາມຊອບທໍາໃຫ້ແກ່ການປົກຄອງ ເຊິ່ງນີ້ແມ່ນສອດຄ່ອງກົງກັບແນວຄິດທິດສະດີຂອງການວິເຄາະວິພາກບົດຂອງ ນໍແມນ ແຟຄລັບ (Fairclough, 1992) ເຊິ່ງໄດ້ໃນບົດພະລາຊະໂອວາດມີການໃຊ້ຄໍາສັບພະນາມບອກບຸລຸດ (Sisouvanh, 2000) ໃນໄວຍາກອນສະບັບນີ້ກໍໄດ້ຈັດແບ່ງສັບພະນາມເປັນສາມບຸລຸດ ທີ່ແທນໃຫ້ຊື່ຂອງຜູ້ເວົ້າ, ຜູ້ຟັງ ຫຼື ຜູ້ກ່າວເຖິງ; ໃນບົດພະລາຊະໂອວາດມີການໃຊ້ຄໍາສັບພະນາມ ທີ່ສະແດງຄວາມສໍາພັນທາງອໍານາດ ໂດຍສະເພາະອໍານາດສູງສຸດໃນຖານະພະຍາຟ້າງຸ່ມເປັນຜູ້ປົກຄອງອານາຈັກ. ໂຄງສ້າງຂອງປະໂຫຍກໃນບົດພະລາຊະໂອວາດສ່ວນຫຼາຍແມ່ນປະໂຫຍກບົງການທີ່ເປັນຄໍາສັ່ງບອກການປະຕິບັດ ແລະ ການຫ້າມໃນສິ່ງທີ່ບໍ່ຄວນປະຕິບັດ ຢ່າງສົມເຫດສົມຜົນ

ເຊິ່ງປະໂຫຍກບົງການກໍແມ່ນໂຄງສ້າງຂອງຊະນິດໜຶ່ງໃນປະໂຫຍກພາສາລາວ ດັ່ງທີ່ມີໂຄງສ້າງຈະແຈ້ງໃນໄວຍາກອນລາວໂດຍ (Paphaphan, 2000). ພະຍາຟ້າງຸ່ມມີວິທີການສ້າງບົດພະລາຊະໂອວາດເພື່ອສ້າງຄວາມຊອບທຳ ແລະ ສື່ອຳນາດຂອງເພິ່ນໂດຍສະເພາະຄວາມເທົ່າທຽມດ້ານການປະຕິບັດລະບຽບກົດໝາຍໃນການປົກຄອງທຸກຊັ້ນຄົນໃນອານາຈັກ. ນອກຈາກນີ້, ໃນບົດພະລາຊະໂອວາດຍັງມີການອ້າງຊື່ຂອງແຖນ ເພື່ອສ້າງຄວາມໜັກ ແໜ້ນໃຫ້ກັບບົດພະລາຊະໂອວາດຜ່ານອຳນາດສັກສິດ, ຄວາມເຊື່ອ ແລະ ເປັນການເຊື່ອມໂຍງອຳນາດການປົກຄອງກັບສິ່ງດັ່ງກ່າວ ເຊິ່ງເປັນວິທີການໃຊ້ພາສາໃນໄວຍາກອນໜ້າທີ່ຂອງ Halliday & Hasan (1976) ໃນບົດຍັງມີການສ້າງຄວາມຊອບທຳໂດຍການເຊື່ອມໂຍງຄຳສັ່ງປັດຈຸບັນກັບປະເພນີ ແລະ ບັນພະບຸລຸດ ຖືວ່າເປັນສ້າງຄວາມຊອບທຳໂດຍອ້າງອີງອຳນາດຈາກອະດີດຜ່ານມາ ເຊິ່ງກົງກັບການຄົ້ນຄວ້າຂອງ Angkhaphanichkit (2019) ແລະ ການວິເຄາະເນື້ອໃນຂອງ (Ministry of Information-Culture, 2002) ທີ່ວິເຄາະວ່າ ການເນັ້ນໜັກຂອງພະອົງແມ່ນຢູ່ໃນສ່ວນທ້າຍນັ້ນກໍແມ່ນແນວທາງນະໂຍບາຍ ແລະ ການຈົງຮັກພັກດີບໍລິສຸດຜຸດຜ່ອງຕໍ່ການ ນຳພາການສະແດງອອກນີ້ແມ່ນການນັບຖືພະເຈົ້າແຜ່ນດິນ ຕ້ອງມີການຜັດປ່ຽນສິ່ງຜູ້ຕາງໜ້າໄປລາຍງານສະພາບການບ້ານເມືອງ ໂດຍຍົກເອົາປູ່ເຈົ້າຫຼວງໂງ່ມມາປາກົດໃນຕອນທ້າຍຂອງການກ່າວ. ພ້ອມນີ້ ຍັງພົບແນວຄວາມຄິດຂອງພະຍາຟ້າງຸ່ມທີ່ຖືວ່າປະຊາກອນເປັນແຫຼ່ງຊັບພະຍາກອນທີ່ມີຄ່າສຳລັບຄວາມຮັ່ງມີຂອງອານາຈັກ ເພິ່ນຖືວ່າຄົນເປັນສົມບັດທີ່ມີຄຸນຄ່າສູງສຸດໃນແຜ່ນດິນ ເຊິ່ງກົງກັບການວິເຄາະຂອງ Phothisane (2000) ທີ່ກ່າວເຖິງເນື້ອໃນພະລາຊະໂອວາດຂອງພະຍາຟ້າງຸ່ມວ່າ ໄດ້ກາຍເປັນຂະໜົບທຳນຽມ ຫຼືກົດໝາຍໃນຫຼາຍລາຊາການຂອງຜູ້ປົກຄອງຕໍ່ມາ ເພາະເຫັນວ່າເປັນການຄຸ້ມຄອງໄພ່ຟ້າປະຊາຊົນເປັນຢ່າງດີ ບໍ່ໃຫ້ກົດຂີ່ຂົ່ມເຫັງ ຍ້ອນຄົນເປັນບໍ່ເກີດຂອງຊັບສົມບັດ. ພະລາຊະໂອວາດຖືສ້າງຂຶ້ນຈາກບັນດາຄຳທີ່ຖືກວ່າມີຄວາມໝາຍ ແລະ ສາມາດສື່ເຖິງແນວຄິດຂອງການປົກຄອງຂອງເພິ່ນໃນເວລານັ້ນ.

## 5. ສະຫຼຸບ

ການສຶກສາຄັ້ງນີ້ໄດ້ວິເຄາະການນຳໃຊ້ພາສາໃນພະລາຊະໂອວາດຂອງພະຍາຟ້າງຸ່ມມະຫາລາດເວລາສະຖາປະນາອານາຈັກລ້ານຊ້າງເອກະພາບ. ຜົນການວິເຄາະພົບວ່າມີ 7 ວິທີ:

1. ການໃຊ້ຄຳສັບທີ່ສະແດງຄວາມສຳພັນທາງອຳນາດ: ພົບການໃຊ້ສັບພະນາມບຸລຸດທີໜຶ່ງ "ເຮົາ" ເພື່ອສະແດງອຳນາດສູງສຸດຂອງພະຍາຟ້າງຸ່ມ, ແລະ ສັບພະນາມບຸລຸດທີສອງ "ເຈົ້າທັງຫຼາຍ" ເພື່ອເອີ້ນຂຸນນາງ. ນອກຈາກນັ້ນຍັງມີຄຳສັບທີ່ລະບຸຊົນຊັ້ນທາງສັງຄົມເຊັ່ນ "ໄພ່", "ຂ້ອຍ", ແລະ "ເສນາ" ເພື່ອສ້າງໂຄງສ້າງລຳດັບຊັ້ນທາງສັງຄົມ.

2. ໂຄງສ້າງປະໂຫຍກທາງໄວຍາກອນ: ພົບປະໂຫຍກບົງການທີ່ເລີ່ມດ້ວຍ "ໃຫ້" ແລະ "ຢ່າ" ເພື່ອສັ່ງການແລະຫ້າມຢ່າງຊັດເຈນ, ໂຄງສ້າງປະໂຫຍກບອກເຫດ-ຜົນ "ຄັນ...ກໍ..." ເພື່ອສະໜັບສະໜູນຄຳສັ່ງດ້ວຍເຫດຜົນ, ແລະ ການຈັດຮຽງຕາມລຳດັບຄວາມສຳຄັນດ້ວຍຄຳວ່າ "ອັນໜຶ່ງ".

3. ວິທີທາງວາທະກຳ ແລະ ກົນລະຍຸດທາງພາສາ: ມີການລະບຸບຸກຄົນທຸກລະດັບຊົນຊັ້ນເພື່ອສະແດງຄວາມເທົ່າທຽມຕໍ່ໜ້າກົດໝາຍ ແລະ ການໃຊ້ຮູບພາບພົດເພື່ອສື່ອຳນາດ ເຊັ່ນ ພາບພົດຂອງການລົງໂທດ.

4. ການພັນລະນາພິທີກຳເພື່ອສ້າງຄວາມສັກສິດ: ມີການລະບຸຊື່ຂອງແຖນ ແລະ ພື້ນທີ່ສັກສິດເຊັ່ນ "ຊຽງດົງຊຽງທອງ" ເພື່ອເຊື່ອມໂຍງອຳນາດການປົກຄອງກັບພູມສາດອັນສັກສິດ.

5. ການໃຊ້ຄຳຊ້ອນແລະຄຳຄູ່: ພົບຄຳຊ້ອນ ເຊັ່ນ "ຂ້າລັກຄົນໂຈນ", "ຫາວຽກຫາການ" ເພື່ອສ້າງຄວາມຄົບຖ້ວນ, ແລະ ຄຳຄູ່ຂັດແຍ້ງ ເຊັ່ນ "ໂທດອັນໜັກ" ກັບ "ໂທດບໍ່ໜັກ" ເພື່ອສ້າງຄວາມຊັດເຈນໃນລະບົບຄວາມຍຸຕິທຳ.

6. ກົນລະຍຸດການສ້າງຄວາມຊອບທຳ: ມີການອ້າງອີງປະເພນີແລະບັນພະບຸລຸດ ແລະ ການອ້າງອີງພິທີກຳບູຊາແຖນເພື່ອເຊື່ອມໂຍງອຳນາດການປົກຄອງກັບອຳນາດເໜືອທຳມະຊາດ.

7. ການອ້າງອີງຍຸດທະສາດທາງສັງຄົມ ແລະ ເສດຖະກິດ: ພົບການເນັ້ນຄຸນຄ່າຂອງປະຊາກອນຕໍ່ເສດຖະກິດ ແລະ ການກຳນົດມູນຄ່າຂອງຊີວິດແລະຄວາມຜິດຢ່າງຊັດເຈນ.

ພາສາທີ່ນຳໃຊ້ທັງໝົດນີ້ສະແດງໃຫ້ເຫັນວ່າພະຍາຟ້າງຸ່ມໄດ້ໃຊ້ພາສາເປັນເຄື່ອງມືທີ່ມີພະລັງໃນການສະຖາປະນາອຳນາດ, ກຳນົດກົດລະບຽບທາງສັງຄົມ, ແລະ ສ້າງຄວາມຊອບທຳໃນການປົກຄອງຜ່ານການເຊື່ອມໂຍງກັບອຳນາດສັກສິດແລະປະຫວັດສາດ. ພະລາຊະໂອວາດນີ້ບໍ່ພຽງແຕ່ເປັນຄຳສັ່ງ ແຕ່ຍັງເປັນການວາງພື້ນຖານຄຸນຄ່າທາງສັງຄົມແລະການເມືອງໃນການປົກຄອງອານາຈັກລ້ານຊ້າງເອກະພາບ.

ການສຶກສາຄັ້ງນີ້ ເປັນພຽງການສຶກສາດ້ານພາສາທີ່ປາກົດໃນບົດພະລາຊະໂອວາດ ແຕ່ເພື່ອໃຫ້ມີການສຶກສາກວ້າງຂວາງເພີ່ມຕື່ມຄວນມີການວິພາກດ້ານອື່ນອີກ ເຊັ່ນ: ດ້ານອຸດົມການ, ອຳນາດ ແລະ ອື່ນໆທີ່ໃນບົດພະລາຊະໂອວາດ.

## 6. ຂໍ້ຂັດແຍ້ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ້ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Angkhaphanichkit, C. (2019). *Discourse Analysis.* Bangkok: 2nd printing Thammasat University.

Bouasisavath, S. (1997). *The Kingdom and Dharmachakra Bible of Political Science*. Vientiane Capital: Sisavath Plublish.

Fairclough, N. (1992). *Discourse and Text: Linguistic and Intertextual Analysis within Discourse Analysis. London*: Cambridge: Polity Press.

Gadavanij, S. (2022). *Discourse Studies for Communication Development. Bangkok*: National Institute of Development Administration Press.

Halliday, M. A. K., & Hasan, R. (1976). *Cohesion in English*. English Language Series, London: Longman.

Khanthavongxay, P., & Paphaphanh , B. (2024). Discourse Connectors in Udin Bounyavong ' s "From Ten

Years Ago volume 3" Short Story. *Souphanouvong University Journal Multidisciplinary Research and Development*, *10*(4), 250_257. https://doi.org/10.69692/SUJMRD1004250

Luangphasy, D. (2012). *Langxang kingdom*. Vientiane Capital: nakhonesy printing.

Ministry of Information-Culture. (2002). *King Fa Ngum, Founder of the Unified Lan Xang Kingdom*, *650th Anniversary*. Vientiane Capital: State Printing.

Paphaphan, B. (2000). *Lao Grammar III*. vientiane capial: state publish.

Partridge, B. (2006). *Discourse Analysis*:. London: Continuum Books.

Phothisane, N. (2000). *Lao History*. Vientiane Capital: State Plublish.

Sibounheuang, B. (2012). *Lao History*. Vientiane Capital: State Publish.

Sisouvanh, P. (2000). *Lao Grmmare II*. Vientiane Capital: State Plublish.

Thongmexay, kh. (2016). *Lao Language and Culture*. Vientiane Capital: Hanoi Join Stock Printing.

Vilavong, S., & Outhensakda, N. (1994). *Khounboulom King. Vientiane Capital*: National Library.

Vongdala, B. (1992). *Lao Literature*. Vientiane Capital: Social Science Research Institute.